# San Diego Unified School District

# ເຖິງ ບັນດາພໍ່ແມ່, ຜູ້ປົກຄອງນັກຮຽນ, ນາຍຄຣູ, ແລະ ນັກຮຽນທັງຫລາຍ

## ຂ່າວສໍາຄັນກ່ຽວກັບອຸປະກອນການສອນ, ຕຶກອາຄານໂຮງຮຽນ, ແລະ ຄຣູສອນ

***ກົດຫມາຍການສຶກສາ ຣັຖຄາລີຟໍເນັຍ*** ເລກທີ **35186** ຮຽກຮ້ອງໃຫ້ແຈ້ງເຖິງທ່ານດັ່ງຕໍ່ໄປນີ້:

**1.** ມີປື້ມຮຽນ ແລະ ອຸປະກອນການຮຽນພຽງພໍ. ຫມາຍຄວາມວ່າ ນັກຮຽນແຕ່ລະຄົນ, ຮວມທັງພວກນັກຮຽນທີ່ຮຽນພາສາອັງກິດ, ຕ້ອງມີປື້ມຮຽນ ຫລື ອຸປະກອນການສິດສອນ, ຫລື ຕ້ອງມີທັງສອງຢ່າງນີ້ ເພື່ອໃຫ້ເຂົາເຈົ້າໃຊ້ໃນຫ້ອງຮຽນ ແລະ ນໍາໄປໃຊ້ຢູ່ບ້ານ.

**2.** ຕຶກໂຮງຮຽນ ຕ້ອງມີຄວາມສະອາດ, ປອດພັຍ, ແລະ ສ້ອມແປງຮັກສາໃຫ້ດີງາມ.

**3.** ບໍ່ໃຫ້ຕໍາແຫນ່ງຄຣູວ່າງ ຫລື ບໍ່ມອບຫນ້າທີ່ຜິດ. ຕ້ອງມອບຫນ້າທີ່ຄຣູໃສ່ແຕ່ລະຫ້ອງຮຽນ ແລະ ບໍ່ໃຫ້ມີຄຣູສອນສັບປ່ຽນ ຫລື ຄຣູສອນຊົ່ວຄາວຕິດຕໍ່ກັນໄປ. ນາຍຄຣູຕ້ອງມີໃບຢັ້ງຢືນຄຸນນະວຸທິການສອນຖືກຕ້ອງກັບວິຊາສອນຢູ່ໃນຫ້ອງຮຽນ, ຮວມມີທັງໃບຢັ້ງຢືນຕາມຂໍ້ຮຽກຮ້ອງ ສິດສອນນັກຮຽນຜູ້ຮຽນພາສາອັງກິດນໍາ.

ຕໍາແຫນ່ງນາຍຄຣູວ່າງ ຫມາຍເຖິງຕໍາແຫນ່ງພະນັກງານທີ່ມີໃບຢັ້ງຢືນການສອນສະເພາະ ບໍ່ຖືກມອບຫມາຍໃສ່ວຽກແຕ່ຕົ້ນປີ ຈົນເຖິງຫມົດປີ ຫລື, ຖ້າຕໍາແຫນ່ງນີ້ສໍາຫລັບເທີມຮຽນນຶ່ງເທີມ, ແຕ່ຕໍາແຫນ່ງນີ້ບໍ່ຖືກມອບຫມາຍໃສ່ວຽກແຕ່ຕົ້ນເທີມຮຽນ ຈົນຫມົດເທີມຮຽນ.

ການມອບຫນ້າທີ່ຜິດຫມາຍຄວາມວ່າສັບຊ້ອນພະນັກງານທີ່ມີໃບຢັ້ງຢືນການສອນ ຫລື ຫນ້າທີ່ການງານ ບໍ່ຖືກກັບໃບຢັ້ງຢືນ ຫລື ໃບຄຸນນະວຸທິຂອງເຂົາເຈົ້າ, ຫລື ສັບຊ້ອນພະນັກງານມີໃບຢັ້ງຢືນໃສ່ການສິດສອນ ຫລື ໃສ່ຫນ້າທີ່ວຽກງານບໍ່ຖືກກັບໃບຢັ້ງຢືນທີ່ເຂົາເຈົ້າມີ.

**4.** ພວກນັກຮຽນທີ່ສອບເສັງບໍ່ຜ່ານຂໍ້ສອບເສັງອອກຊັ້ນມັທຍົມນຶ່ງພາກ ຫລືທັງສອງພາກໃນທ້າຍຫ້ອງມັທຍົມປີສຸດທ້າຍນັ້ນ ຈະໄດ້ຮັບການສິດສອນ ແລະ ການຊ່ອຍເຫລືອພິເສດຕິດຕໍ່ກັນໄປເຖິງສອງປີຈົນຈົບຊັ້ນມັທຍົມປີສຸດທ້າຍ (ປີທີ **12**), ຫລື ຈົນກວ່ານັກຮຽນເສັງຜ່ານ ຂໍ້ສອບເສັງອອກຊັ້ນມັທຍົມທັງສອງພາກ, ຈະຮຽນຈົບກ່ອນ ຫລື ເສັງຜ່ານກ່ອນອັນໃດອັນນຶ່ງກໍໄດ້.

ຖ້າທ່ານຄິດວ່າຂໍ້ຮຽກຮ້ອງນີ້ບໍ່ຖືກປະຕິບັດຖືກຕ້ອງນັ້ນ, ທ່ານສາມາດປະກອບໃບຟ້ອງຮ້ອງ ທີ່ມີໄວ້ໃຫ້ທ່ານ ຢູ່ທີ່ຫ້ອງການໂຮງຮຽນ ຫລື ທີ່ຫ້ອງການທະນາຍຄວາມສູນກາງສຶກສາທີ່ 4100 Normal Street, Room 2148, San Diego, CA 92103. ທ່ານຍັງສາມາດເອົາໃບຟ້ອງຮ້ອງນີ້ໄດ້ຈາກ ແວບໄຊ (Web site) ຂອງກະຊວງສຶກສາຣັຖຄາລີຟໍເນັຍທີ່: http://www.cde.ca.gov/re/cp/uc/.

Revised per AB 347 January 2008